# ຍຸດທະສາດຂ້າມຜ່ານ

## ເພື່ອກະກຽມໃຫ້ແກ່ການຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວ

ໂດຍ:  ທ່ານ ດາວວີ ວົງໄຊ, ຫົວໜ້າກົມກົມອົງການຈັດຕັ້ງສາກົນ
ກະຊວງການຕ່າງປະເທດ

# ຄວາມເປັນມາ

- **2021** - ວາລະສຳຄັນ ສຳລັບຂະບວນການວາງແຜນພັດທະນາແຫ່ງຊາດ;
- **ການຫຼຸດພົ້ນອອກຈາກສະຖານະ  LDC** - ເປົ້າໝາຍໄລຍະຍາວຂອງລັດຖະບານ ນັບຕັ້ງແຕ່ປີ **2000** - ກຳນົດໄວ້ໃນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ;
- ສປປ ລາວ ສາມາດຜ່ານການປະເມີນ ໂດຍ ອົງການ ສປຊ **(2 ຄັ້ງຕິດຕໍ່ກັນ)** - ໄດ້ຮັບການສະເໜີແນະ ສຳລັບການຫຼຸດພົ້ນ:
  - ຄັ້ງທຳອິດ ໃນການທົບທວນປີ **2018** (ລາຍໄດ້ສະເລ່ຍແຫ່ງຊາດຕໍ່ຫົວຄົນ ແລະ ດັບສະນີຊັບສິນມະນຸດ);
  - ຄັ້ງທີ 2 ໃນການທົບທວນປີ **2021** (ຜ່ານທັງໝົດ **3** ເງື່ອນໄຂ ລວມເຖິງ ດັດສະນີ**ຄວາມ**ບອບບາງທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ).
- ສປປ ລາວ ໄດ້ຮັບ**ການຂະຫຍາຍໄລຍະກະກຽມໃຫ້ແກ່ການຫຼຸດພົ້ນ ເປັນເວລາ 5 ປີ** ເນື່ອງຈາກຜົນກະທົບຈາກການລະບາດ ຂອງ ພະຍາດໂຄວິດ-19;
- **ການຫຼຸດພົ້ນ ແມ່ນຄາດວ່າຈະເປັນທາງການໃນປີ 2026** ແຕ່ຍັງຈຳເປັນຕ້ອງມີການຕິດຕາມຢ່າງໃກ້ຊິດຈາກ ຄະນະກຳມະການນະໂຍບາຍການພັດທະນາ.

# ຜົນການປະເມີນໃນປີ 2021

## Gross national income (GNI) per capita*

Value $2,449

Thresholds:

| | |
|---|---|
| Inclusion | $1,018 or below |
| Graduation | $1,222 or above |
| Income-only: | $2,444 or above |




## Human assets index (HAI)*

Value: 72.8

Thresholds

| | |
|---|---|
| Inclusion: | 62.0 or below |
| Graduation: | 66.0 or above |




### HAI indicators*

**Under-five mortality rate**
Value: 45.5
Index: 78.5
Source: UN IAG for Child Mortality Estimation

**Prevalence of stunting**
Value: 31.2
Index: 42.5
Source: UNICEF/WHO/World Bank Joint Child Malnutrition Estimates

**Maternal mortality rate**
Value: 185
Index: 84.9
Source: UN IAG for Maternal Mortality

**Gross secondary school enrolment ratio**
Value: 65.8
Index: 62.0
Source: UNESCO

**Adult literacy rate**
Value: 84.7
Index: 79.5
Source: UNESCO

**Gender parity index for gross secondary school enrolment**
Value: 0.94
Index: 89.3
Source: UNESCO

## Economic and environmental vulnerability index (EVI)*

Value: 27.0

Thresholds

| | |
|---|---|
| Inclusion: | 36.0 or above |
| Graduation: | 32.0 or below |




### EVI indicators*

**Share of agriculture, forestry and fishing in GDP**
Value: 17.7
Index: 28.3
Source: UN/DESA, Statistics Division

**Remoteness and landlockedness**
Value: 55.5
Index: 56.9
Source: CDP

**Merchandise export concentration**
Value: 0.25
Index: 17.4
Source: UNCTAD

**Instability of exports of goods and services**
Value: 5.1
Index: 10.2
Source: UN/DESA, Statistics Division

**Share of population in low elevated coastal zones**
Value: 0.0
Index: 0.0
Source: CIESIN

**Share of population living in drylands**
Value: 0.0
Index: 0.0
Source: CDP

**Instability of agricultural production**
Value: 5.2
Index: 20.0
Source: FAO

**Victims of disasters**
Value: 2.86
Index: 83.5
Source: EM-DAT

# ຈຸດປະສົງຕົ້ນຕໍ ຂອງ ຍຸດທະສາດຂ້າມຜ່ານ

1. **ກຳນົດແນວທາງຂອງການຫຼຸດພົ້ນ** ເຊັ່ນວ່າ: ຂົງເຂດທີ່ຈຳເປັນຕ້ອງໄດ້ເອົາໃຈໃສ່ ໃນໄລຍະກະກຽມໃຫ້ແກ່ການຫຼຸດພົ້ນ
2. ສັງລວມບັນດາຂໍ້ມູນກ່ຽວກັບ **ຜົນກະທົບຈາກການສູນເສຍມາດຕະການສະໜັບສະໜູນ** ທີ່ ຄີຍໄດ້ຮັບການຊ່ວຍເຫຼືອຈາກສາກົນ ສຳລັບ LDC ພ້ອມທັງກຳນົດວິທີ ແລະ ແນວທາງໃນການແກ້ໄຂຊ່ອງຫວ່າງທາງດ້ານຂໍ້ມູນທີ່ກ່ຽວຂ້ອງ
3. **ກຳນົດຕົວວັດແທກ** ທີ່ຕ້ອງໄດ້ມີການບໍລິຫານຈັດການ ເຊັ່ນວ່າ: ພັນທະທາງດ້ານການເມືອງ ແລະ ຂໍ້ຜູກພັນທາງດ້ານກົດໝາຍຂອງສາກົນຕ່າງໆ
4. **ກຳນົດມາດຕະການຜ່ອນຜັນ** ສຳລັບຜົນກະທົບສະເພາະບາງອັນ ທີ່ມາຈາກການຫຼຸດພົ້ນ
5. **ກຳນົດມາດຕະການ (ຂົງເຂດວຽກງານ) ທີ່ເປັນບຸລິມະສິດ**, ຂອບເວລາ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະຂະແໜງການ ພາຍໃຕ້ການຊີ້ນຳລວມຂອງ ຄະນະຊີ້ນຳລະດັບຊາດ LDC

## ເປົ້າໝາຍໂດຍລວມ ແລະ ກອງປະຊຸມ ລະດັບສູງໂຕະມົນ ຄັ້ງທີ 13

1. **ສ້າງຄວາມເຂົ້າໃຈ**ໃຫ້ແກ່ ພາກສ່ວນກຳນົດນະໂຍບາຍ ໃນທົ່ວພາກ ລັດ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບ:
   - ຜົນປະໂຫຍດ ແລະ ກາລະໂອກາດ;
   - ການຫັນປ່ຽນທີ່ອາດຈະເກີດຂຶ້ນ; ແລະ
   - ມາດຕະການທີ່ຈຳເປັນ ເພື່ອແກ້ໄຂ ແລະ ດັດປັບໃຫ້ເຂົ້າກັບ ສະພາບ ໃນໄລຍະຂ້າມຜ່ານຈາກການຫຼຸດພົ້ນ.
2. **ລາຍງານ, ສັງລວມຂໍ້ມູນ ແລະ ປຶກສາຫາລື** ກັບທຸກພາກສ່ວນທີ່ ກ່ຽວຂ້ອງ ລວມເຖິງ ພາກເອກະຊົນ ແລະ ອົງການຈັດຕັ້ງທາງ ສັງຄົມ ເພື່ອແນໃສ່ຮັບປະກັນການມີສ່ວນຮ່ວມຈາກທຸກພາກສ່ວນ ໃນຂະບວນການສ້າງຍຸດທະສາດຂ້າມຜ່ານ.

# ຄາດຄະເນໝາກຜົນ (ແຕ່ນີ້ ຈົນເຖິງຕົ້ນປີ 2022)

- **ຍຸດທະສາດຂ້າມຜ່ານ (A Smooth Transition Strategy - STS):**
  - ການກໍານົດບັນດາມາດຕະການສະໜັບສະໜູນ ທີ່ຈໍາເປັນສໍາລັບໄລຍະ 2021-2026 ແລະ ພາຍຫຼັງ;
  - ພາຍໃຕ້ການຊີ້ນໍາໂດຍລວມຂອງ ຄະນະຊີ້ນໍາລະດັບຊາດ ສໍາລັບປະເທດດ້ອຍພັດທະນາ (LDC Task Force); ແລະ
  - ບົນພື້ນຖານການປະກອບສ່ວນຈາກທົ່ວພາກລັດ ຕໍ່ກັບແນວທາງໃນການຫຼຸດພົ້ນອອກຈາກສະຖານພາບ LDC ຂອງ ສປປ ລາວ.
- **ການສ້າງຕັ້ງ ໜ່ວຍງານຫຼັກລະຫວ່າງກະຊວງ** ເຊິ່ງເປັນໜ່ວຍງານປຶກສາຫາລື ພາຍໃຕ້ ຄະນະຊີ້ນໍາລະດັບຊາດ ໂດຍ ກົມອົງການຈັດຕັ້ງສາກົນ ເປັນຜູ້ນໍາພາຂະບວນການ;
- **ການສ້າງ ກຸ່ມສະໜັບສະໜູນສໍາລັບການຂ້າມຜ່ານ** ເຊິ່ງປະກອບດ້ວຍ ຄູ່ຮ່ວມການຄ້າ ແລະ ຄູ່ຮ່ວມພັດທະນາ ພາຍໃຕ້ການນໍາພາໂດຍ ກົມອົງການຈັດຕັ້ງສາກົນ ກະຊວງການຕ່າງປະເທດ ແລະ ການປະສານສົມທົບກັບ ສໍານັກງານຜູ້ຕາງໜ້າແຫ່ງ ສປປ ລາວ ທີ່ ນິວຢອກ ແລະ ເຈນີວາ.

# ຂະບວນການ

- ນຳສະເໜີ ຂະບວນການ ແລະ ແຜນງານ ໃນການສ້າງຍຸດທະສາດຂ້າມຜ່ານ, ລວມທັງ ຂະບວນການປຶກສາຫາລື, ແຜນງານ ແລະ ການສະໜັບສະໜູນຈາກ ຄູ່ຮ່ວມພັດທະນາ ຢູ່ທີ່ **ກອງປະຊຸມລະດັບສູງໂຕະມົນ ຄັ້ງທີ 13;**
- ການເຊື້ອເຊີນເຂົ້າຮ່ວມ **ກຸ່ມສະໜັບສະໜູນການຂ້າມຜ່ານ** ສຳລັບການປຶກສາຫາລືຂອງທຸກພາກສ່ວນ ໃນຂະບວນການສ້າງຍຸດທະສາດ ແລະ ການກຳນົດການສະໜັບສະໜູນເພີ່ມຕື່ມຈາກສາກົນ;
- ການຮັບຮອງເອົາ **ແຜນດຳເນີນງານ ໂດຮາ** ສຳລັບປະເທດດ້ອຍພັດທະນາ ທີ່ ກອງປະຊຸມ ສປຊ ວ່າດ້ວຍປະເທດດ້ອຍພັດທະນາ ຄັ້ງທີ 5 ທີ່ ໂດຮາ, ປະເທດ ກາຕ້າ ແລະ ການຜັນຂະຫຍາຍເຂົ້າໃນ ຍຸດທະສາດຂ້າມຜ່ານ ຂອງ ສປປ ລາວ;
- **ການສຳເລັດ ແລະ ຮັບຮອງເອົາ** ຍຸດທະສາດຂ້າມຜ່ານ ໃນໄລຍະໄຕມາດທີ 1 ຫຼື 2 ຂອງປີ **2022.**

# ການນຳພາ

- **ກະຊວງແຜນການ ແລະ ການລົງທຶນ:** ມີບົດບາດໃນການພັດທະນາ ແລະ ຕິດຕາມການຈັດຕັ້ງປະຕິບັດແຜນພັດທະນາແຫ່ງຊາດ ແລະ ຮັບປະກັນການສອດຄ່ອງກັບ 9th NSEDP ແລະ SDGs;
- **ກະຊວງການເງິນ:** ມີບົດບາດເຊິ່ງຕິດພັນກັບຜົນກະທົບຂອງການຫຼຸດພົ້ນ ໂດຍສະເພາະແມ່ນຕໍ່ກັບການເຂົ້າເຖິງແຫຼ່ງ ແລະ ເງື່ອນໄຂສຳລັບການກູ້ຢືມເງິນ, ມີບົດບາດໃນການສ້າງນະໂຍບາຍທີ່ສອດຄ່ອງ ເພື່ອຮັກສາລະດັບຄາດໝາຍອີງຕາມເງື່ອນໄຂທາງດ້ານ GNI ແລະ EVI;
- **ກະຊວງອຸດສາຫະກຳ ແລະ ການຄ້າ:** ມີບົດບາດໃນການສົ່ງເສີມ ຄວາມອາດສາມາດດ້ານການຜະລິດ ແລະ ການສ້າງຄວາມຫຼາກຫຼາຍທາງດ້ານສິນຄ້າ ແລະ ການຄ້າ, ມີບົດບາດໃນການສ້າງນະໂຍບາຍທີ່ສອດຄ່ອງ ເພື່ອຮັກສາລະດັບຄາດໝາຍອີງຕາມເງື່ອນໄຂທາງດ້ານ EVI;
- **ກະຊວງກະສິກຳ ແລະ ປ່າໄມ້:** ມີບົດບາດໃນການຮັບປະກັນ ທາງດ້ານຊີວິດການເປັນຢູ່ຂອງປະຊາຊົນ ແລະ ການສ້າງມູນຄ່າຕ່ອງໂສ້ໃຫ້ແກ່ຂະແໜງກະສິກຳ;

# ການນຳພາ

- **ກະຊວງສຶກສາທິການ ແລະ ກິລາ:** ມີບົດບາດໃນການສ້າງນະໂຍບາຍທີ່ສອດຄ່ອງ ເພື່ອຮັກສາລະດັບຄາດໝາຍອີງຕາມເງື່ອນໄຂທາງດ້ານ HAI;
- **ກະຊວງສາທາລະນະສຸກ:** ມີບົດບາດໃນການສ້າງນະໂຍບາຍທີ່ສອດຄ່ອງ ເພື່ອຮັກສາລະດັບຄາດໝາຍອີງຕາມເງື່ອນໄຂທາງດ້ານ HAI;
- **ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ:** ມີບົດບາດໃນການປົກປັກຮັກສາ ແລະ ບໍລິຫານການນຳໃຊ້ຊັບພະຍາກອນທຳມະຊາດ ເພື່ອຫຼຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ ແລະ ສິ່ງແວດລ້ອມ ແລະ ເດີນຕາມແນວທາງການພັດທະນາແບບຍືນຍົງ;
- **ກະຊວງໂຍທາທິການ ແລະ ຂົນສົ່ງ:** ມີບົດບາດໃນການພັດທະນາພື້ນຖານໂຄງລ່າງ ທີ່ສະໜັບສະໜູນໃຫ້ແກ່ດຳເນີນການຄ້າທີ່ຫຼາກຫຼາຍ ແລະ ການປັບປຸງດ້ານການຜະລິດ.

# ຂໍຂອບໃຈ